| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດຕົວແທນຂາຍປີ້ ແລະ ຈອງບ່ອນໂດຍສານທາງອາກາດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoPWT-CAD-9 | 03.01.2018 | ກົມການບິນພົນລະເຮືອນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | H - ການຂົນສົ່ງ ແລະ ສາງສິນຄ້າ |
| ຈຸດປະສົງທີ່ຕ້ອງຂໍ ໃບ ອະນຸຍາດ | ເນື່ອງຈາກ ຜູ້ປະກອບກິດຈະການນັ້ນແມ່ນຕ້ອງເປັນຕົວແທນຕາງໜ້າໃຫ້ແກ່ ສາຍການບິນທັງພາຍໃນ ແລະ ຕ່າງປະເທດ ເພື່ອການປະສານງານກັບຜູ້ໃຊ້ບໍລິການໂດຍກົງ, ເພື່ອຮັບປະກັນຫລຸດຜ່ອນຄວາມສ່ຽງຕໍ່ຜູ້ໃຊ້ບໍລິການ ໃຫ້ໄດ້ບໍລິການການເດີນທາງຕົວຈິງ, ຈຶ່ງຈໍາເປັນຕ້ອງມີການຄວບຄຸມຄວາມມີຕົວຕົນ, ຄຸນນະພາບ ໃຫ້ສະໜອງການບໍລິການທີ່ສະດວກ, ວ່ອງໄວ ແລະ ປອດໄພ. |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຊຶ່ງດໍາເນີນທຸລະກິດ ຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ຊຶ່ງດໍາເນີນກິດຈະການ ໃນນາມເປັນຕົວແທນ ຂອງບັນດາສາຍການບິນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມສັນຍາທີ່ໄດ້ເຮັດກັນ. |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ກົມການບິນພົນລະເຮືອນ ມີສິດ ແລະ ໜ້າທີ່ພິຈາລະນາ ການອະນຸຍາດກິດຈະການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ໃນຂອບເຂດທົ່ວປະເທດ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການພິຈາລະນາຄໍາຮ້ອງໃນການອອກໃບອະນຸຍາດ** | 10 | ຖ້າບໍ່ອອກໃບອະນຸຍາດ, ກົມຕ້ອງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນໃຫ້ວິສາຫະກິດດັ່ງກ່າວຊາບ ພາຍໃນ 5 ວັນລັດຖະການ |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1.ໄດ້ຂຶ້ນທະບຽນວິສາຫະກິດ ເພື່ອດໍາເນີນທຸລະກິດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດຢ່າງຖືກຕ້ອງ. 2. ໄດ້ເຮັດສັນຍາເປັນຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດກັບບັນດາສາຍການບິນທີ່ກ່ຽວຂ້ອງ; 3. ມີບຸກຄະລາກອນທີ່ມີຄວາມຮູ້,ຄວາມສາມາດ ແລະ ມີປະສົບການ ເຊິ່ງມີປະກາດ ສະນິຍະບັດ ຫຼື ໃບຢັ້ງຢືນຄຸນນະວຸດຢ່າງຖືກຕ້ອງເປັນຕົ້ນຄື: (i) ນັກວິຊາການດ້ານເຕັກໂນໂລຊີຂໍ້ມູນຂ່າວສານ (IT) ຢ່າງໜ້ອຍໜຶ່ງຄົນ; (ii) ພະນັກງານຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດທີ່ມີຄວາມຮູ້,ຄວາມສາມາດນໍາໃຊ້ອຸປະກອນເຕັກໂນໂລຊີຂໍ້ມູນຂ່າວສານ (IT) ແລະ ມີຄວາມຮູ້ດ້ານພາສາອັງກິດຢ່າງດີ ຢ່າງໜ້ອຍ 2 ຄົນ; 4. ມີລະບົບພ້ອມດ້ວຍອຸປະກອນສື່ສານເຕັກໂນໂລຊີ ຂໍ້ມູນຂ່າວສານ ທີ່ສາມາດເຊື່ອມຕໍ່ກັບລະບົບສື່ສານດັ່ງກ່າວ ຂອງບັນດາສາຍການບິນ ແລະ ບັນດາບໍລິສັດຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ ທັງພາຍໃນ ແລະ ຕ່າງປະເທດ; 5. ມີອຸປະກອນທີ່ທັນສະໄໝ ແລະ ພຽງພໍ ສໍາຫລັບນໍາໃຊ້ໃນການຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ; 6. ຕ້ອງມີສໍານັກງານຖາວອນ ຫຼື ສາຂາຢູ່ ສປປ ລາວ. | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ໄດ້ປະຕິເສດ ໃນກໍລະນີທີ່ຜູ້ສະໝັກບໍ່ສາມາດຕອບສະໜອງເງື່ອນໄຂ ຫຼື ຂໍ້ກໍານົດ ທີ່ໄດ້ກໍານົດໄວ້ພາຍໃຕ້ກົດໝາຍ. | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ຕ້ອງໄດ້ຂໍອະນຸຍາດສືບຕໍ່ຄືນໃໝ່ 30 ວັນກ່ອນໝົດອາຍຸການນໍາໃຊ້. ຖ້າຫາກຕ້ອງການສືບຕໍ່ດໍາເນີນກິດຈະການໃນປີຕໍ່ໄປ,ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດນັ້ນ ຕ້ອງໄດ້ປະກອບເອກະສານຍື່ນສະເໜີຕໍ່ກົມການບິນພົນລະເຮືອນ ເພື່ອພິຈາລະນາ ແລະ ຕ້ອງປະຕິບັດໄດ້ຕາມເງື່ອນໄຂໃນກົດໝາຍ ແລະ ກົມຈະພິຈາລະນາຄໍາຮ້ອງຂໍຕໍ່ພາຍໃນ 5 ວັນລັດຖະການ |

| ຄ່າທຳນຽມ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມຄຳ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາ ການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 750000.00 | 20000.00 | 770000.00 |
| **ຄຳເຫັນ** | ອີງຕາມ ລັດຖະບັນຍັດ ເລກທີ 003/ປປທ, ສ່ວນຄ່າໃບຄຳຮ້ອງແມ່ນອີງຕາມການແຈ້ງຂອງເຈົ້າທີ່. | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 20000.00 | 375000.00 | 395000.00 |
| **ຄຳເຫັນ** | ອີງຕາມ ລັດຖະບັນຍັດ ເລກທີ 003/ປປທ, ສ່ວນຄ່າໃບຄຳຮ້ອງແມ່ນອີງຕາມການແຈ້ງຂອງເຈົ້າທີ່. | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ກົດໝາຍວ່າດ້ວຍ ການບິນພົນລະເຮືອນ | 01/ສພຊ | 19.05.2005 | ພາກທີ III<br>ທຸລະກິດກ່ຽວກັບການບິນພົນລະເຮືອນ<br>ໝວດທີ 1<br>ການດຳເນີນທຸລະກິດກ່ຽວກັບການບິນ<br>ມາດຕາ 51 ແລະ ມາດຕາ 52.6 |
| ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ຕົວແທນຂາຍປີ້ເຮືອບິນ ແລະ ຈອງບ່ອນໂດຍສານທາງອາກາດ | 2526/ຍທຂ | 16.02.2011 | ມາດຕາ 2 - ມາດຕາ 7<br>ຕົວແທນຂາຍປີເຮືອບິນ ແລະ<br>ຈອງບ່ອນໂດຍສານທາງອາກາດ |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບຢັ້ງຢືນການມອບພັນທະອາກອນປະຈຳປີ |

| ເອກະສານປະກອບ |
|---|
| ໃບທະບຽນວິສາຫະກິດ ຂອງບໍລິສັດຈໍາກັດ |
| ໃບຢັ້ງຢືນເງິນຄໍ້າປະກັນຈາກທະນາຄານທີ່ຫົວໜ່ວຍທຸລະກິດໄດ້ເປີດບັນຊີໄວ້ |
| ໃບຢັ້ງຢືນທີ່ຢູ່ |
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |
| ສໍາເນົາພາດສະປອດຂອງອໍານວຍການ |
| ໂຄງຮ່າງການຈັດຕັ້ງ ຫຼື ສະພາບໍລິຫານ |
| ບົດວິພາກເສດຖະກິດເຕັກນິກ |
| ສັນຍາຮ່ວມທຶນ, ສັນຍາສ້າງຕັ້ງ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |
| ໃບຢັ້ງຢືນວຸດທິການສຶກສາ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 6 | 86 |